

ສະໜັບສະໜູນການຊ່ວຍເຫຼືອລ້າຈາກ ກະຊວງກະສິກຳ ສປະເທດສະຫະລັດ
ອາເມລິກາ ໂດຍການຮ່ວມມືຈັດຕັ້ງປະຕິບັດ ລະຫວ່າງ ກະຊວງສຶກສາທິການ
ແລະ ກິລາ, ສປປ ລາວ, ມະຫາວິທະຍາໄລ ໂອເຣກອນ ແລະ ອົງການບັນເທົາທຸກ
ກາໂຕລິກ.

*Funded by the United States Department of Agriculture in collaboration with the Ministry of Education and Sports, Lao PDR, University of Oregon, and CRS*

*blogs.uoregon.edu/iecollaborativelaos/*

# + Creating an Inclusive Environment

# ສ້າງສິ່ງແວດລ້ອມແບບການສຶກສາຮຽນຮ່ວມເພື່ອຕ້ອນຮັບເດັກທຸກໆຄົນ


ໂດຍ ດຣ. ວານ ໂຄຣດສ໌

ມະຫາວິທະຍາໄລ ໂອເຣກອນ


2014

# Session Goals
# ເປົ້າໝາຍຂອງການຝຶກອົບຮົມ

## We will learn:

- Identify characteristics of a welcoming environment for children with disabilities
- Identify challenges to inclusion for parents of children with and without disabilities
- Identify challenges to inclusion for teachers
- Identify challenges to inclusion for children with and without disabilities
- Identify steps to address

## ພວກເຮົາຈະຮຽນໄດ້ຖ້າມີ:

- ລັກສະນະຂອງສິ່ງແວດລ້ອມແບບຕ້ອນຮັບສຳລັບເດັກນ້ອຍພິການ.
- ຍັ້ງຍືນໃຫ້ເຫັນເຖິງສິ່ງທ້າທາຍຕໍ່ການລວມເອົາພໍ່ແມ່ທີ່ມີລູກ ເປັນພິການ ແລະ ບໍ່ເປັນເດັກນ້ອຍພິການ
- ຍັ້ງຍືນໃຫ້ເຫັນເຖິງສິ່ງທ້າທາຍຕໍ່ການລວມເອົາຄູສອນໃຫ້ມີສ່ວນຮ່ວມ
- ຍັ້ງຍືນໃຫ້ເຫັນເຖິງສິ່ງທ້າທາຍຕໍ່ການລວມເອົາເດັກທີ່ເປັນພິການ ແລະ ບໍ່ເປັນພິການ
- ຍັ້ງຍືນໃຫ້ເຫັນເຖິງຂັ້ນຕອນໃນການຈັດຕັ້ງປະຕິບັດວຽກງານການສຶກສາຮຽນຮ່ວມ ແລະ ການແກ້ໄຂສິ່ງທ້າທາຍຂອງການຮຽນຮ່ວມ

# What is a welcoming environment?
# ສິ່ງແວດລ້ອມທີ່ເປັນການຕ້ອນຮັບແມ່ນຫຍັງ?

**Success looks like:**

**ລັກສະນະຄວາມສຳເລັດ:**

- List at least 6 characteristics of an school that would be welcoming to a child with a disability.

- ໃຫ້ຂຽນຢ່າງໜ້ອຍ 6 ລັກສະນະຂອງໂຮງຮຽນທີ່ສາມາດຕ້ອນຮັບເດັກນ້ອຍພິການໄດ້.

# There can be barriers to inclusion
# ອາດມີອຸປະສັກຕໍ່ການຮ່ວມເອົາ

| Challenges! | ສິ່ງທ້າທາຍ |
| --- | --- |
| ▪ There will be challenges.<br>▪ Our goal is to anticipate them and make systemic changes that will make the school welcoming for all. | ▪ ມັນຈະມີສິ່ງທ້າທາຍ.<br>▪ ເປົ້າໝາຍຂອງພວກເຮົາແມ່ນປັບປຸງສິ່ງແວດລ້ອມຂອງໂຮງຮຽນໃຫ້ເປັນບ່ອນຕ້ອນຮັບສໍາລັບເດັກນ້ອຍທຸກຄົນ. |

# The story of Lari (1) ເລື່ອງສັ້ນຂອງລາຣີ

- Lari is a six year old girl who has cerebral palsy. When she was born, she went for several minutes without oxygen before breathing on her own. Her parents noticed that she was not moving or sitting up like other children by the time she was nine months old. When she was two, and not yet walking, a doctor diagnosed her with cerebral palsy.

- ລາຣີ ເປັນເດັກຍິງອາຍຸ 6 ປີ, ລາວ ເປັນ ພິການທາງສະໝອງ. ຕອນລາວເກີດ, ລາວຂາດອາກາດຫາຍໃຈຫລາຍນາທີກ່ອນທີ່ລາວຈະຫາຍໃຈດ້ວຍຕົນເອງໄດ້. ພໍ່ແມ່ຂອງລາວສັງເກດວ່າ ຕອນລາວອາຍຸໄດ້ 9 ເດືອນ ລາວບໍ່ເຄື່ອນເໜັງ ຫຼື ນັ່ງຄືກັບເດັກນ້ອຍຄົນອື່ນໆ. ເມື່ອລາວອາຍຸໄດ້ 2 ປີ ລາວຍັງບໍ່ຍ່າງ, ທ່ານ ໝໍບົ່ງພະຍາດວ່າລາວເປັນພິການທາງສະໝອງ.

# + The story of Lari (2) ເລື່ອງສັ້ນຂອງລາຣີ

- Now Lari is starting school. She walks, but her walking is very slow and she can't go up and down stairs without help. She tries to talk, but it is difficult to understand her. Her parents and brothers can understand what she is saying but teachers and other children can not understand her slow and distorted sounds. Lari tries to feed herself, but it takes a long time, and she tends to spill when she tries to drink from a cup. Her parents and teachers suspect that she is a bright child because she remembers many details and is showing an interest in pointing out letters and numbers she recognizes.

- ປະຈຸບັນ, ລາຣີກຳລັງເຂົ້າຮຽນ. ລາວຍ່າງ ແຕ່ວ່າຍ່າງຊ້າຫລາຍ ແລະ ລາວບໍ່ສາມາດຍ່າງຂຶ້ນ ແລະ ລົງຂັ້ນໄດໄດ້ຖ້າບໍ່ມີຄົນຊ່ວຍ. ລາວພະຍາຍາມເວົ້າ, ແຕ່ມັນຍາກທີ່ຈະເຂົ້າໃຈ. ພໍ່ແມ່ ແລະ ອ້າຍຂອງລາວເຂົ້າໃຈເວລາລາວເວົ້າ ແຕ່ຄູ ແລະ ເດັກນ້ອຍຜູ້ອື່ນບໍ່ເຂົ້າໃຈສຽງທີ່ຊ້າ ແລະ ຜິດພ້ຽນ. ລາຣີພະຍາຍາມກິນອາຫານດ້ວຍຕົນເອງ, ແຕ່ມັນໃຊ້ເວລາດົນ ແລະ ລາວເຮັດນ້ຳຝົງ ເວລາລາວດື່ມນ້ຳຈາກຈອກ. ພໍ່ແມ່ ແລະ ຄູຂອງລາວສົງໄສວ່າລາວເປັນເດັກສະຫຼາດ ຍ້ອນລາວຈື່ລາຍລະອຽດໄດ້ຫລາຍຢ່າງ ແລະ ມັນສະແດງອອກໃນເວລາລາວຊີ້ໃສ່ຕົວໜັງສື ແລະ ຕົວເລກທີ່ລາວຮູ້ຈັກ.

# + In small groups, identify action steps

## ຈັດກຸ່ມນ້ອຍ, ຊີ້ບອກຂັ້ນຕອນ(ບາດກ້າວ)ການປະຕິບັດ

**Please discuss and list**

1. What support and preparation will the teacher need to be successful in including Lari
2. What preparation will the other children need ?
3. What preparation will Lari's parents need?
4. What classroom changes will need to be made to create a welcoming environment.
5. What preparation may be done to encourage support of parents of non-delayed kids.

**ຈົ່ງສົນທະນາ ແລະ ຂຽນອອກເປັນລຳດັບ**

1. ຄູຕ້ອງການໆ ສະໜັບສະໜູນ ແລະ ກະກຽມການຫຍັງແດ່ ເພື່ອໃຫ້ສຳເລັດໃນການລວມ ເອົາ ລາຣີ ໃນການຮຽນຮ່ວມ?
2. ເດັກນ້ອຍອື່ນໆຕ້ອງມີການກະກຽມຫຍັງແດ່?
3. ພໍ່ແມ່ຂອງ ລາຣີ ຕ້ອງການກະກຽມຫຍັງແດ່?
4. ຫ້ອງຮຽນຕ້ອງມີການປັບປຸງຫຍັງແດ່ເພື່ອສ້າງສິ່ງແວດລ້ອມແບບຕ້ອນຮັບ?
5. ຕ້ອງມີການກະກຽມຫຍັງແດ່ເພື່ອຊຸກຍູ້ການສະໜັບສະໜູນຈາກພໍ່ແມ່ຂອງເດັກນ້ອຍທີ່ບໍ່ມີບັນຫາໃນການຮຽນ(ບໍ່ເປັນພິການ)

# + Even with preparation we face challenges ເຖິງວ່າຈະມີການກະກຽມແຕ່ພວກເຮົາຍັງປະເຊີນໜ້າກັບສິ່ງທ້າທາຍ.

| Let's discuss: | ຈົ່ງສົນທະນາ: |
|---|---|

- A parent of a child with Down Syndrome says they won't send their child to school because they are afraid they will be teased?

- ພໍ່ແມ່ຂອງເດັກນ້ອຍທີ່ເປັນ ດາວ ຊິນໂດມ ເວົ້າວ່າ ເຂົາຈະບໍ່ສົ່ງລູກເຂົ້າໂຮງຮຽນ ຍ້ອນພວກເຂົາຢ້ານລູກຕົນເອງຈະຖືກຍອກລໍ້ໃນທາງລົບ.

# What would you do?
# ທ່ານຈະເຮັດແນວໃດ?

| Actions? | ການປະຕິບັດ? |
|---|---|
| Children in your class are ignoring, teasing or isolating a child with a disability. | ເດັກນ້ອຍຢູ່ໃນຫ້ອງຮຽນຂອງທ່ານ ເມີນເສີຍ(ບໍ່ໃສ່ໃຈ), ຢອກໄຍ ຫຼື ແຍກເດັກນ້ອຍທີ່ເປັນພິການໃຫ້ຢູ່ຜູ້ດຽວ. |

# What would you do?
# ທ່ານຈະເຮັດແນວໃດ?

| Actions? | ການປະຕິບັດ? |
|---|---|
| You are a principal, and a teacher says they don't want a child with disabilities in their class because it's too much work. | ທ່ານເປັນຜູ້ອຳນວຍການໂຮງຮຽນ, ແລະ ຄູສອນ ເວົ້າວ່າ ພວກເຂົາບໍ່ຕ້ອງການໃຫ້ມີເດັກພິການຢູ່ຫ້ອງຮຽນ ຍ້ອນວ່າມັນເປັນການເພີ່ມວຽກຫລາຍເກີນໄປ. |

# + What would you do? ທ່ານຈະເຮັດແນວໃດ?

| Actions? | ການປະຕິບັດ? |
|---|---|
| A parent of a non-delayed child complains that they don’t want a child with autism in the class because it is affecting the ability of their child to learn? | ພໍ່ແມ່ຂອງເດັກນ້ອຍທີ່ບໍ່ເປັນພິການ ຈົ່ມ(ບໍ່ພໍໃຈ)ວ່າພວກເຂົາບໍ່ຕ້ອງການໃຫ້ເດັກນ້ອຍທີ່ເປັນໂອຕິດຊຶມຮຽນຢູ່ຫ້ອງຮຽນດຽວກັນກັບລູກເຂົາເຈົ້າ ຍ້ອນມັນສົ່ງຜົນກະທົບຕໍ່ການຮຽນຂອງລູກພວກເຂົາ? |

# Session goals – Can you implement this? ເປົ້າໝາຍຂອງການຝຶກອົບຮົມ- ທ່ານສາມາດປະຕິບັດໄດ້ບໍ່?

- Identify characteristics of a welcoming environment for children with disabilities
- Identify challenges to inclusion for parents of children with and without disabilities
- Identify challenges to inclusion for teachers
- Identify challenges to inclusion for children with and without disabilities
- Identify action steps to address challenges to inclusion

- ບອກລັກສະນະຂອງສິ່ງແວດລ້ອມແບບຕ້ອນຮັບສຳລັບເດັກນ້ອຍພິການທຸກຄົນ.
- ບອກສິ່ງທ້າທາຍຂອງການຮຽນຮ່ວມ ໃຫ້ແກ່ພໍ່ແມ່ທີ່ມີລູກ ເປັນ ແລະ ບໍ່ເປັນເດັກນ້ອຍພິການ
- ບອກສິ່ງທີ່ທ້າທາຍຂອງການຮຽນຮ່ວມໃຫ້ແກ່ຄູ
- ບອກສິ່ງທ້າທາຍໃນການຮຽນຮ່ວມ ສຳລັບເດັກທີ່ເປັນ ແລະ ບໍ່ເປັນພິການ
- ບອກຂັ້ນຕອນ(ບາດກ້າວ)ໃນການຈັດຕັ້ງປະຕິບັດວຽກງານການສຶກສາຮຽນຮ່ວມ ແລະ ການແກ້ໄຂບັນຫາສິ່ງທ້າທາຍຂອງການຮຽນຮ່ວມ